ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ..321../ລບ
ນະຄອນຫຼວງວຽງຈັນ, ວັນທີ..18/09/2019

ດຳລັດ
ວ່າດ້ວຍການປ່ຽນແປງດິນຟ້າອາກາດ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 041/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ກົດໝາຍວ່າດ້ວຍອຸຕຸນິຍົມ ແລະ ອຸທົກກະສາດ ສະບັບເລກທີ 36/ສພຊ, ລົງວັນທີ 13 ພະຈິກ 2017;
- ອີງຕາມ ໜັງສືສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 4642/ກຊສ, ລົງ ວັນທີ 16 ສິງຫາ 2019.

ລັດຖະບານ ອອກດຳລັດ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານປ່ຽນແປງດິນຟ້າອາກາດ ເພື່ອຕ້ານ, ສະກັດກັ້ນ, ຫຼຸດຜ່ອນຄວາມສ່ຽງຈາກຜົນກະທົບຂອງ ການປ່ຽນແປງດິນຟ້າອາກາດ ແນໃສ່ຮັບປະກັນຄວາມປອດໄພດ້ານ ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ, ຊີວະນາໆພັນ, ໂຄງລ່າງພື້ນຖານ ສາມາດເຊື່ອມໂຍງກັບພາກພື້ນ, ສາກົນ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມຂອງຊາດ ຕາມທິດຍືນຍົງ ແລະ ສີຂຽວ.

ມາດຕາ 2 ການປ່ຽນແປງດິນຟ້າອາກາດ

ການປ່ຽນແປງດິນຟ້າອາກາດ ແມ່ນ ສະພາວະການປ່ຽນແປງຂອງອຸນຫະພູມສະເລ່ຍເທິງພື້ນຜິວໂລກ ທີ່ ເພີ່ມຂຶ້ນເກີນເກນປົກກະຕິ ໃນໄລຍະຍາວ ຊຶ່ງເກີດມາຈາກການກະທຳຂອງມະນຸດ ໂດຍກົງ ຫຼື ທາງອ້ອມ ຫຼື ເກີດຈາກທຳມະຊາດ ທີ່ເຮັດໃຫ້ອົງປະກອບຂອງຊັ້ນບັນຍາກາດປ່ຽນແປງ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄວາມບອບບາງ** ໝາຍເຖິງ ຄວາມອ່ອນໄຫວ ແລະ ບໍ່ສາມາດຮັບມືກັບຜົນກະທົບທີ່ເກີດຈາກການ ປ່ຽນແປງດິນຟ້າອາກາດ;

2. **ຄວາມທົນທານ** ໝາຍເຖິງ ຄວາມສາມາດໃນການຮັບມືກັບຜົນກະທົບ ຫຼື ຟື້ນຄືນສູ່ສະພາບປົກກະຕິ ຂອງ ຊຸມຊົນ, ສັງຄົມ ລວມທັງໂຄງລ່າງພື້ນຖານ ແລະ ລະບົບນິເວດ;

3. **ທາດອາຍເຮືອນແກ້ວ** ໝາຍເຖິງ ບັນດາທາດອາຍ ເປັນຕົ້ນ ກາກບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ (N_2O), ໄຮໂດຣຟຣູໂອໂຣກາກບອນ (HFCs), ເປີຟຣູໂອໂຣກາກບອນ (PFCs), ເຮັກຊາຟຣູອໍໄລ (SF_6) ທີ່ຖືກປ່ອຍອອກຈາກທຳມະຊາດ ຫຼື ເກີດຂຶ້ນຈາກການກະທຳຂອງມະນຸດ ຂຶ້ນສູ່ຊັ້ນບັນຍາກາດກໍ່ຕົວເປັນຊັ້ນອາຍເຮືອນແກ້ວ ຊຶ່ງເປັນສາເຫດເຮັດໃຫ້ໂລກຮ້ອນ ຫຼື ການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການເຜົາໄໝ້ນ້ຳມັນເຊື້ອໄຟ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ການສ້າງ ແລະ ທຳລາຍສິ່ງເສດເຫຼືອ;

4. **ແຫຼ່ງຊຶມຊັບທາດອາຍກາກບອນ** ໝາຍເຖິງ ປ່າໄມ້, ດິນ, ພືດ ແລະ ຊັບພະຍາກອນນ້ຳ ທີ່ຊຶມຊັບ ແລະ ເກັບກັກເອົາທາດອາຍກາກບອນຈາກຊັ້ນບັນຍາກາດ ໂດຍຜ່ານຂະບວນການສັງເຄາະແສງ;

5. **ຄວາມສ່ຽງ** ໝາຍເຖິງ ປາກົດການ ຫຼື ເຫດການໜຶ່ງ ຊຶ່ງມີທ່າອ່ຽງ ທີ່ຈະເປັນສາເຫດໃຫ້ເກີດມີຜົນກະທົບທາງລົບຕໍ່ກັບ ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ, ຊີວະນາໆພັນ, ໂຄງລ່າງພື້ນຖານ;

6. **ແບບຈຳລອງສະພາບອາກາດ** ໝາຍເຖິງ ການຄິດໄລ່ທາງດ້ານສະຖິຕິ ທີ່ອີງໃສ່ຄຸນລັກສະນະທາງດ້ານຟີຊິກ, ເຄມີ ແລະ ຊີວະ ຊຶ່ງເປັນອົງປະກອບໃນການຄົ້ນຄວ້າ ແລະ ສຶກສາຂະບວນການປ່ຽນແປງດິນຟ້າອາກາດ ແລະ ຍັງເປັນເປົ້າໝາຍນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ເພື່ອປະເມີນ ແລະ ຄາດຄະເນ ສະພາບດິນຟ້າອາກາດ ແຕ່ລະໄລຍະ.

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ

ລັດ ເອົາໃຈໃສ່ວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ດ້ວຍການວາງ ນະໂຍບາຍ, ຍຸດທະສາດ, ພັດທະນາຊັບພະຍາກອນມະນຸດ, ພັດທະນາຫຼັກສູດການສຶກສາ, ຄົ້ນຄວ້າວິທະຍາສາດ, ສ້າງຈິດສຳນຶກ, ສະໜອງຂໍ້ມູນ ຂ່າວສານ, ງົບປະມານ, ວັດຖຸປະກອນ, ພາຫະນະ ລວມທັງການນຳໃຊ້ພູມປັນຍາທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ພ້ອມກັນນັ້ນໃນການກຳນົດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນ ຕ້ອງໄດ້ກຳນົດວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນແຜນການດັ່ງກ່າວ.

ລັດ ຊຸກຍູ້ ສິ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດລົງທຶນ, ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານປ່ຽນແປງດິນຟ້າອາກາດ.

ມາດຕາ 5 ຫຼັກການກ່ຽວກັບວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ

ຫຼັກການກ່ຽວກັບວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ມີດັ່ງນີ້:

1. ຮັບປະກັນການເຊື່ອມສານເອົາວຽກງານຄຸ້ມຄອງການປ່ຽນແປງດິນຟ້າອາກາດ ເຂົ້າໃນການກຳນົດ ວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນການ, ແຜນງານ, ໂຄງການຂອງບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ;

2. ຮັບປະກັນການກຳນົດ ແລະ ຈັດຕັ້ງປະຕິບັດມາດຕະການປັບຕົວ ເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ທາງເລືອກໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

3. ຮັບປະກັນການສະໜອງຂໍ້ມູນ ຂ່າວສານ ດ້ານວຽກງານປ່ຽນແປງດິນຟ້າອາກາດໃຫ້ແກ່ສັງຄົມຢ່າງເປັນລະບົບ ແລະ ທັນການ;

4. ປະສານສົມທົບ ແລະ ການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ;

5. ສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ມາດຕາ 6 ພັນທະຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃນການຕິດຕາມການປ່ຽນແປງດິນຝ້າອາກາດ ແລະ ປະກອບສ່ວນໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເພື່ອຮັບປະກັນການພັດທະນາ ຕາມທິດຍືນຍົງ ແລະ ສີຂຽວ.

ມາດຕາ 7 ຂອບເຂດການນຳໃຊ້

ດຳລັດສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ ສປປ ລາວ.

ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານປ່ຽນແປງ ດິນຝ້າອາກາດ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ, ການພັດທະນາ ຊັບພະຍາກອນມະນຸດ ແລະ ການປະຕິບັດສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

ໝວດທີ 2
ລະບົບຂໍ້ມູນ ຂ່າວສານ ດ້ານການປ່ຽນແປງດິນຝ້າອາກາດ

ມາດຕາ 9 ການສ້າງລະບົບຂໍ້ມູນ ຂ່າວສານ ກ່ຽວກັບການປ່ຽນແປງດິນຝ້າອາກາດ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສ້າງລະບົບຂໍ້ມູນ ຂ່າວສານກ່ຽວກັບການປ່ຽນ ແປງດິນຝ້າອາກາດ ເພື່ອເກັບກຳ, ລວບລວມ, ຄຸ້ມຄອງ, ສະໜອງ ແລະ ບໍລິການຂໍ້ມູນ ຂ່າວສານການປ່ຽນ ແປງດິນຝ້າອາກາດ ໃຫ້ຖືກຕ້ອງ, ຊັດເຈນ, ທັນການ ພ້ອມທັງເກັບຮັກສາຂໍ້ມູນໄວ້ຍາວນານ, ປອດໄພ ແລະ ສາມາດເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານໄພພິບັດແຫ່ງຊາດ ແລະ ສູນສະຖິຕິແຫ່ງຊາດ ໂດຍປະສານສົມທົບ ກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ສ້າງ, ປັບປຸງ, ຄຸ້ມຄອງ, ນຳ ໃຊ້ລະບົບຂໍ້ມູນ ຂ່າວສານການປ່ຽນແປງດິນຝ້າອາກາດຂອງຕົນ ທີ່ສາມາດເຊື່ອມຕໍ່ລະບົບຂໍ້ມູນ ຂ່າວສານກ່ຽວ ກັບການປ່ຽນແປງດິນຝ້າອາກາດຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ແລກປ່ຽນຂໍ້ ມູນ ຂ່າວສານກັບຂະແໜງການອື່ນທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນຕົນ.

ຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ກະສິກຳ ແລະ ປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ, ແຮງງານ ແລະ ສະຫວັດດີການສັງຄົມ, ວິທະຍາສາດ ແລະ ເຕັກໂນໂລຊີ, ຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ສຶກສາທິການ ແລະ ກິລາ, ສາທາລະນະສຸກ ສະໜອງຂໍ້ມູນທີ່ຕິດ ພັນກັບວຽກງານປ່ຽນແປງດິນຝ້າອາກາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຕົນ ໃຫ້ຂະ ແໜງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ມາດຕາ 10 ການເຂົ້າເຖິງ ແລະ ການນຳໃຊ້ຂໍ້ມູນ ຂ່າວສານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີສິດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບການປ່ຽນ ແປງດິນຝ້າອາກາດ ທີ່ໄດ້ເຜີຍແຜ່ຢ່າງເປັນທາງການໃນລະບົບຂໍ້ມູນ ຂ່າວສານ ກ່ຽວກັບການປ່ຽນແປງດິນຝ້າ ອາກາດ ຕາມລະບຽບການ.

ສຳລັບຂໍ້ມູນກ່ຽວກັບການສຳຫຼວດ ແລະ ການຄົ້ນຄວ້າດ້ານການປ່ຽນແປງດິນຝ້າອາກາດ ທີ່ນຳໃຊ້ເຂົ້າ ໃນເປົ້າໝາຍທຸລະກິດ ໃຫ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

ມາດຕາ 11 ການລາຍງານກ່ຽວກັບການປ່ຽນແປງດິນຝ້າອາກາດ

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນທ້ອງຖິ່ນ ລາຍງານສະພາບການປ່ຽນແປງດິນຝ້າອາກາດໃນທ້ອງຖິ່ນຕົນໃຫ້ຂັ້ນເທິງຂອງຕົນ ໂດຍປະສານສົມທົບກັບພະແນກການ, ຫ້ອງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ກະຊວງທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສະຫຼຸບສັງລວມສະພາບການປ່ຽນແປງດິນຝ້າອາກາດ ສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລາຍງານໃຫ້ລັດຖະບານ ກ່ຽວກັບສະພາບການປ່ຽນແປງດິນຝ້າອາກາດໃນຂອບເຂດທົ່ວປະເທດ ໂດຍອີງຕາມຂໍ້ມູນການລາຍງານຂອງຂະແໜງການສາຍຕັ້ງຂອງຕົນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ອົງການຈັດຕັ້ງສາກົນ ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ໝວດທີ 3
ການຮັບມືການປ່ຽນແປງດິນຝ້າອາກາດ

ມາດຕາ 12 ການຮັບມືການປ່ຽນແປງດິນຝ້າອາກາດ

ການຮັບມືການປ່ຽນແປງດິນຝ້າອາກາດ ແມ່ນ ການດຳເນີນຍັນດາວຽກງານ ກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຝ້າອາກາດ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວ.

ມາດຕາ 13 ມາດຕະການຮັບມືການປ່ຽນແປງດິນຝ້າອາກາດ

ຂະແໜງການທີ່ກ່ຽວຂ້ອງ ຕ້ອງກຳນົດມາດຕະການຮັບມືການປ່ຽນແປງດິນຝ້າອາກາດ ທີ່ພົວພັນກັບຂະແໜງການຕົນໃນແຕ່ລະໄລຍະ ເພື່ອສ້າງຄວາມທົນທານໃຫ້ຂົງເຂດວຽກງານທີ່ກ່ຽວຂ້ອງ, ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເປັນຕົ້ນ ການນຳໃຊ້ທີ່ດິນ, ປ່າໄມ້, ຊັບພະຍາກອນນ້ຳ, ກະສິກຳ, ສາທາລະນະສຸກ, ພະລັງງານ, ອຸດສາຫະກຳ, ການພັດທະນາຕົວເມືອງ, ການສ້າງຄວາມທົນທານຂອງໂຄງລ່າງພື້ນຖານ.

ໝວດທີ 4
ການປັບຕົວເຂົ້າກັບການປ່ຽນແປງດິນຝ້າອາກາດ

ມາດຕາ 14 ການປັບຕົວເຂົ້າກັບການປ່ຽນແປງດິນຝ້າອາກາດ

ການປັບຕົວເຂົ້າກັບການປ່ຽນແປງດິນຝ້າອາກາດ ແມ່ນ ການປັບສະພາບຂອງດິນ, ສັດ, ພືດ, ລະບົບນິເວດ, ໂຄງລ່າງພື້ນຖານ, ຜັງເມືອງໃນຕົວເມືອງ ແລະ ອື່ນໆ ໃຫ້ມີຄວາມທົນທານຕໍ່ສະພາບການປ່ຽນແປງດິນຝ້າອາກາດ ແລະ ໃຫ້ໄດ້ຮັບຜົນກະທົບໜ້ອຍທີ່ສຸດ ດ້ວຍການດຳເນີນມາດຕະການທີ່ເໝາະສົມໃນການຫຼຸດຜ່ອນຄວາມບອບບາງ, ຄວາມສ່ຽງ ແລະ ຄວາມເສຍຫາຍທີ່ອາດເກີດຂຶ້ນ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດການປ່ຽນແປງດິນຝ້າອາກາດ, ປະເມີນຄວາມ

ບອບບາງ, ກຳນົດເຂດຄວາມບອບບາງ, ສ້າງແຜນທີ່ຄວາມບອບບາງ ໃຫ້ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການ ແລະ ແຜນງານຂອງຂະແໜງການ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ.

ມາດຕາ 15 ການສຳຫຼວດການປ່ຽນແປງດິນຟ້າອາກາດ

ການສຳຫຼວດການປ່ຽນແປງດິນຟ້າອາກາດ ແມ່ນ ການເກັບກຳສັງລວມຂໍ້ມູນ, ປະເມີນ, ວິໄຈຂໍ້ມູນ ແລະ ສ້າງແບບຈຳລອງສະພາບອາກາດ ເພື່ອນຳໃຊ້ໃນການວາງແຜນຄຸ້ມຄອງການປ່ຽນແປງດິນຟ້າອາກາດ.

ມາດຕາ 16 ການປະເມີນຄວາມບອບບາງ

ການປະເມີນຄວາມບອບບາງ ແມ່ນ ການຕີລາຄາລະດັບຄວາມບອບບາງ ແລະ ຄາດຄະເນຜົນກະທົບຈາກທ່າອ່ຽງຂອງການປ່ຽນແປງອຸນຫະພູມ, ປະລິມານນ້ຳຝົນ ແລະ ເຫດການ ຫຼື ຜົນກະທົບຈາກສະພາບການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ພາຍຸ, ໄພນ້ຳຖ້ວມ, ໄພແຫ້ງແລ້ງ, ໄພໜາວ ໂດຍອີງໃສ່ຂໍ້ມູນທີ່ເກັບກຳໄດ້ໃນແຕ່ລະໄລຍະ ແລະ ຜົນການຄາດຄະເນໃນຕໍ່ໜ້າ ເພື່ອນຳຜົນການປະເມີນນັ້ນ ມາໃຊ້ເປັນຂໍ້ມູນພື້ນຖານໃນການວາງນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການ ເພື່ອກະກຽມຄວາມພ້ອມໃນການຮັບມື.

ມາດຕາ 17 ການກຳນົດເຂດຄວາມບອບບາງ

ການກຳນົດເຂດຄວາມບອບບາງ ແມ່ນ ການກຳນົດລັກສະນະ, ຈຸດພິເສດທາງພູມສັນຖານ ແລະ ລະດັບຄວາມບອບບາງ ເພື່ອຮອງຮັບການວາງແຜນຫຼຸດຜ່ອນຜົນກະທົບ, ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການວາງແຜນພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ເປັນຕົ້ນ ການວາງແຜນຜັງເມືອງຂອງຕົວເມືອງ, ການຈັດສັນພູມລຳເນົາ, ການພັດທະນາໂຄງລ່າງພື້ນຖານ, ໂຄງການພັດທະນາຕ່າງໆ.

ມາດຕາ 18 ການສ້າງແຜນທີ່ຄວາມບອບບາງ

ການສ້າງແຜນທີ່ຄວາມບອບບາງ ແມ່ນ ການລວມເອົາຂໍ້ມູນຕ່າງໆຂອງປະເພດຄວາມສ່ຽງຈາກການປ່ຽນແປງດິນຟ້າອາກາດ ແລະ ຄວາມສາມາດໃນການປັບຕົວທີ່ສະແດງເຖິງສະຖານທີ່ຕັ້ງພູມສັນຖານ ແລະ ພູມລຳເນົາຂອງປະຊາຊົນ, ຊັບສິນ ແລະ ທຳມະຊາດ ທີ່ອາດເກີດມີຄວາມສ່ຽງຕໍ່ເຫດການຮ້າຍແຮງຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ແລະ ສັງຄົມ.

ໝວດທີ 5
ການຫຼຸດຜ່ອນທາດອາຍເຮືອນແກ້ວ

ມາດຕາ 19 ການຫຼຸດຜ່ອນທາດອາຍເຮືອນແກ້ວ

ການຫຼຸດຜ່ອນທາດອາຍເຮືອນແກ້ວ ແມ່ນ ການດຳເນີນຂະບວນການກ່ຽວກັບການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ.

ມາດຕາ 20 ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ

ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແມ່ນ ການກຳນົດມາດຕະການ ຫຼື ທາງເລືອກທີ່ເໝາະສົມ ໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການກະທຳຂອງມະນຸດຂຶ້ນສູ່ຊັ້ນບັນຍາກາດໃຫ້ຢູ່ໃນລະດັບທີ່ບໍ່ສົ່ງຜົນຮ້າຍແຮງຕໍ່ການປ່ຽນແປງດິນຟ້າອາກາດຂອງໂລກ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກຳນົດ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການກ່ຽວກັບວຽກງານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

ຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ພະລັງງານ ແລະ ບໍ່ແຮ່, ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ວິທະຍາສາດ ແລະ ເຕັກໂນໂລຊີ ຮັບຜິດຊອບສ້າງແຜນການ, ກຳນົດ ມາດຕະຖານເຕັກນິກ, ເຄື່ອງມື ແລະ ເຕັກໂນໂລຊີ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມ.

ມາດຕາ 21 ການເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ

ການເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ ແມ່ນ ການກຳນົດມາດຕະການ ຫຼື ທາງເລືອກທີ່ເໝາະສົມ ໃນການເພີ່ມ ຫຼື ຮັກສາແຫຼ່ງທີ່ຊຶມຊັບແລະເກັບກັກເອົາທາດອາຍກາກບອນຈາກຊັ້ນບັນຍາກາດ ໂດຍຜ່ານຂະ ບວນການສັງເຄາະແສງ ເປັນຕົ້ນ ປ່າໄມ້, ດິນ, ພືດ, ຊັບພະຍາກອນນ້ຳ.

ຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະສິກຳ ແລະ ປ່າໄມ້ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ກຳນົດ ນະໂຍບາຍ, ແຜນຍຸດທະສາດ ແລະ ແຜນການ ກ່ຽວກັບການເພີ່ມແຫຼ່ງຊຶມຊັບທາດອາຍກາກບອນ.

ມາດຕາ 22 ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການທີ່ ກ່ຽວຂ້ອງ ສຳຫຼວດ, ເກັບກຳຂໍ້ມູນ ແຫຼ່ງກຳເນີດ ແລະ ແຫຼ່ງຊຶມຊັບທາດອາຍກາກບອນ ເປັນຕົ້ນ ທາດອາຍ ກາກບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ (N_2O), ໄຮໂດຣຟຼູໂອໂຣກາກບອນ (HFCs), ເປີຟຼູໂອໂຣກາກບອນ (PFCs), ເຮັກຊາຟຼູອໍໄລ (SF_6) ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ການກຳ ນົດທາງເລືອກໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

ໝວດທີ 6
ການມີສ່ວນຮ່ວມຂອງສັງຄົມ

ມາດຕາ 23 ການມີສ່ວນຮ່ວມຂອງສັງຄົມ

ການສ້າງຍຸດທະສາດ, ການປະເມີນຄວາມຫຍຸ້ງຍາກ, ການປັບຕົວ, ການຫຼຸດຜ່ອນທາດອາຍເຮືອນ ແກ້ວ ແລະ ການຕິດຕາມ ກວດກາວຽກງານດັ່ງກ່າວ ຕ້ອງມີການເຂົ້າຮ່ວມຂອງສັງຄົມ ແລະ ປະຊາຊົນທີ່ກ່ຽວ ຂ້ອງ ໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ ຫຼື ທາງອ້ອມ.

ມາດຕາ 24 ການສຶກສາ ແລະ ການສ້າງຈິດສຳນຶກ

ທຸກພາກສ່ວນໃນສັງຄົມ ມີໜ້າທີ່ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການສຶກສາ ກ່ຽວກັບວຽກງານ ປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການພັດທະນາຫຼັກສູດການສຶກສາ ຫຼື ຫຼັກສູດການຮຽນການສອນຢູ່ໃນລະ ບົບໂຮງຮຽນ, ນອກລະບົບໂຮງຮຽນ, ໂຮງຮຽນວິຊາຊີບທຸກຂັ້ນ ແລະ ມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສ້າງຈິດສຳນຶກ ກ່ຽວກັບການປ່ຽນ ແປງດິນຟ້າອາກາດ ແລະ ສ້າງຂະບວນການເນື່ອງໃນໂອກາດວັນສຳຄັນຕ່າງໆ.

ໝວດທີ 7
ກອງທຶນການປ່ຽນແປງດິນຟ້າອາກາດ

ມາດຕາ 25 ກອງທຶນການປ່ຽນແປງດິນຟ້າອາກາດ

ກອງທຶນການປ່ຽນແປງດິນຟ້າອາກາດ ແມ່ນ ສ່ວນໜຶ່ງຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.

ມາດຕາ 26 ແຫຼ່ງກອງທຶນການປ່ຽນແປງດິນຟ້າອາກາດ

ນອກຈາກແຫຼ່ງທຶນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມແລ້ວ ຍັງມີແຫຼ່ງທຶນ ດັ່ງນີ້:

1. ທຶນ ທີ່ໄດ້ຮັບຈາກກອງທຶນສາກົນ ສຳລັບວຽກງານການປ່ຽນແປງດິນຟ້າອາກາດ;
2. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 27 ເປົ້າໝາຍການນຳໃຊ້ກອງທຶນການປ່ຽນແປງດິນຟ້າອາກາດ

ກອງທຶນການປ່ຽນແປງດິນຟ້າອາກາດ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການສ້າງ ແລະ ປັບປຸງນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນການ ແລະ ແຜນງານ ກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ;
2. ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ, ສ້າງຄວາມທົນທານ, ສ້າງແບບຈຳລອງ ແລະ ພື້ນທີ່ຕົວແບບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ;
3. ການສົ່ງເສີມການນຳໃຊ້ເຕັກໂນໂລຊີ ທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການປ່ອຍທາດອາຍເຮືອນແກ້ວຕ່ຳ;
4. ການຍົກລະດັບຄວາມຮູ້ ແລະ ຄວາມສາມາດ ທາງດ້ານວິຊາການໃຫ້ແກ່ ບຸກຄະລາກອນ, ການສຶກສາ ແລະ ປູກຈິດສຳນຶກ ກ່ຽວກັບການປ່ຽນແປງດິນຟ້າອາກາດ;
5. ການຄຸ້ມຄອງ ແລະ ການແກ້ໄຂ ບັນຫາການປ່ຽນແປງດິນຟ້າອາກາດທີ່ເປັນບູລິມະສິດໃນລະດັບຕ່າງໆ;
6. ການຊຸກຍູ້, ສົ່ງເສີມ ແລະ ພັດທະນາພຸມປັນຍາທ້ອງຖິ່ນ ເຂົ້າໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ.

ມາດຕາ 28 ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນການປ່ຽນແປງດິນຟ້າອາກາດ

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນການປ່ຽນແປງດິນຟ້າອາກາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບ ຕາມລະບຽບງົບປະມານແຫ່ງລັດ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ;
2. ຖືກຕ້ອງຕາມເປົ້າໝາຍ, ປະຢັດ ແລະ ມີປະສິດທິຜົນ;
3. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງກຳນົດເຂົ້າໃນແຜນງົບປະມານແຫ່ງລັດປະຈຳປີ, ຜ່ານລະບົບບັນຊີຂອງຄັງເງິນແຫ່ງຊາດ, ລົງບັນຊີຕາມຫຼັກການ ແລະ ຕາມລະບຽບການພື້ນຖານການບັນຊີແຫ່ງລັດ;
4. ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ ແລະ ໂປ່ງໃສ, ຮັບປະກັນລາຍຈ່າຍ ຕາມແຜນການປະຈຳປີ;
5. ມີການກວດກາ ແລະ ກວດສອບ ເປັນປົກກະຕິ ຕາມກົດໝາຍ.

ໝວດທີ 8
ຂໍ້ຫ້າມ

ມາດຕາ 29 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ບຸກລຸກ ແລະ ທຳລາຍແໜ່ງຊຶມຊັບທາດການາຍບອນ ໃນບ່ອນທີ່ລັດເກືອດຫ້າມ;
2. ສ້າງອຸປະສັກ, ຂັດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ;
3. ປະຕິເສດການຮ່ວມມື, ລາຍງານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕໍ່ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ;
4. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
5. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດໂດຍບໍ່ມີມູນຄວາມຈິງ;
6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

ມາດຕາ 30 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ໃຫ້ຄອບຄົວ ຫຼື ພັກພວກຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ເລີ່ນເລີ້, ເມີນເສີຍ ຫຼື ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;
4. ກີດໜ່ວງ, ຖ່ວງດຶງການພິຈາລະນາເອກະສານຕ່າງໆ;
5. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທາງລັດຖະການ;
6. ສະໜອງ ຫຼື ບໍລິການຂໍ້ມູນກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ ໂດຍບໍ່ໄດ້ຮັບອະນຸຍາດ;
7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

ໝວດທີ 9
ການຄຸ້ມຄອງ ແລະ ກວດກາ ວຽກງານການປ່ຽນແປງດິນຟ້າອາກາດ

ມາດຕາ 31 ອົງການຄຸ້ມຄອງ ແລະ ກວດກາ ວຽກງານການປ່ຽນແປງດິນຟ້າອາກາດ

ລັດຖະບານ ຄຸ້ມຄອງ ແລະ ກວດກາ ວຽກງານການປ່ຽນແປງດິນຟ້າອາກາດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຜິດ ຊອບໂດຍກົງ ແລະ ປະສານສົມທົບກັບກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການປ່ຽນແປງດິນຟ້າອາກາດ ປະກອບດ້ວຍ:

1. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ;
3. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນເມືອງ.

ມາດຕາ 32 ສິດ ແລະ ໜ້າທີ່ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ສະເໜີໃຫ້ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການປ່ຽນແປງ ດິນຟ້າອາກາດໃຫ້ກາຍເປັນແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການປ່ຽນ ແປງດິນຟ້າອາກາດ ໃນຂອບເຂດທົ່ວປະເທດ;

4. ດຳເນີນການປະເມີນຄວາມບອບບາງ, ສ້າງແຜນປັບຕົວ, ກຳນົດທາງເລືອກໃນການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ;

5. ສ້າງລະບົບຂໍ້ມູນ ຂ່າວສານ, ສຳຫຼວດ, ການຄົ້ນຄວ້າວິໄຈ, ເກັບກຳ, ສະໜອງຂໍ້ມູນ ແລະ ຈັດຕັ້ງ ປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

6. ຕິດຕາມ ກວດກາການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ໃນຂອບເຂດທົ່ວປະເທດ;

7. ສະເໜີໂຈະ ຫຼື ລົບລ້າງຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງຂະແໜງການ ຫຼື ອົງການ ປົກຄອງທ້ອງຖິ່ນ ທີ່ຂັດກັບກົດໝາຍ;

8. ຊີ້ນຳສາຍຕັ້ງຂອງຕົນ ໃນການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

9. ສ້າງ, ບຳລຸງ ແລະ ຍົກລະດັບພະນັກງານ ດ້ານການປ່ຽນແປງດິນຟ້າອາກາດ ແລະ ສ້າງເງື່ອນໄຂໃຫ້ ແກ່ທຸກພາກສ່ວນໃນສັງຄົມ ເຂົ້າຮ່ວມ ແລະ ປະກອບສ່ວນໃນການເຄື່ອນໄຫວວຽກງານດັ່ງກ່າວ;

10. ປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນທີ່ກ່ຽວຂ້ອງໃນການ ຈັດຕັ້ງປະຕິບັດວຽກງານຂອງຕົນ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນວຽກງານການປ່ຽນແປງດິນຟ້າອາກາດ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 33 ສິດ ແລະ ໜ້າທີ່ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດ ຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ດຳລັດ ແລະ ລະບຽບການກ່ຽວກັບການປ່ຽນແປງດິນຟ້າອາກາດ;

2. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການປ່ຽນ ແປງດິນຟ້າອາກາດ;

3. ດຳເນີນການປະເມີນຄວາມບອບບາງ, ສ້າງແຜນປັບຕົວ, ກຳນົດທາງເລືອກໃນການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ;

4. ສ້າງລະບົບຂໍ້ມູນ ຂ່າວສານ, ສຳຫຼວດ, ການຄົ້ນຄວ້າວິໄຈ, ເກັບກຳ, ສະໜອງຂໍ້ມູນ ກ່ຽວກັບການ ປ່ຽນແປງດິນຟ້າອາກາດ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

5. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

6. ສະເໜີໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງພະແນກການ ຫຼື ອົງການປົກຄອງຂັ້ນເມືອງ ທີ່ຂັດກັບກົດໝາຍ;

7. ຊີ້ນຳຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

8. ສ້າງ, ບຳລຸງ ແລະ ຍົກລະດັບພະນັກງານ ດ້ານການປ່ຽນແປງດິນຟ້າອາກາດ ແລະ ສ້າງເງື່ອນໄຂໃຫ້ແກ່ທຸກພາກສ່ວນໃນສັງຄົມ ເຂົ້າຮ່ວມ ແລະ ປະກອບສ່ວນໃນການເຄື່ອນໄຫວວຽກງານດັ່ງກ່າວ;

9. ປະສານສົມທົບກັບພະແນກການ ແລະ ອົງການປົກຄອງຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນວຽກງານການປ່ຽນແປງດິນຟ້າອາກາດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 34 ສິດ ແລະ ໜ້າທີ່ຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບການປ່ຽນແປງດິນຟ້າອາກາດ;

2. ເຜີຍແຜ່ ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ ໃນຂັ້ນເມືອງ;

3. ເຂົ້າຮ່ວມການປະເມີນຄວາມສ່ຽງ, ສ້າງແຜນປັບຕົວ, ກຳນົດທາງເລືອກໃນການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ;

4. ເກັບກຳ, ສະໜອງຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ ໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

5. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

6. ແນະນຳ ແລະ ຊຸກຍູ້ ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

7. ປະສານສົມທົບກັບຫ້ອງການ ແລະ ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ໃຫ້ພະແນກຊັບພະ ຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 35 ສິດ ແລະ ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນວຽກງານຂອງຕົນ;

2. ສຶກສາຄົ້ນຄວ້າ ການນຳໃຊ້ ແລະ ພັດທະນາ ແນວພັນພືດ, ພັນສັດ ແລະ ການປະມົງ, ຊຸກຍູ້ ແລະ ສົ່ງເສີມ ການໃຊ້ເຕັກໂນໂລຊີທີ່ເປັນມິດກັບສິ່ງແວດລ້ອມ, ການຜະລິດກະສິກຳ ແລະ ປ່າໄມ້ ໃຫ້ສາມາດປັບຕົວ

ເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ລວມທັງການສ້າງໂຄງລ່າງພື້ນຖານ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການສ້າງຄັນຄູກັ້ນນ້ຳ, ປະຕູນ້ຳ, ຄອງລະບາຍນ້ຳ;

3. ຄຸ້ມຄອງ ແລະ ນຳໃຊ້ສະຖານີອຸຕຸນິຍົມ ເພື່ອວັດແທກ, ເກັບກຳຂໍ້ມູນ, ສັງເກດບາງປັດໄຈອຸຕຸນິຍົມ ທີ່ກະທົບໃສ່ການຈະເລີນເຕີບໂຕຂອງພືດ, ການລະບາດຂອງສັດຕູພືດ, ຕົ້ນໄມ້, ສັດ ແລະ ການປ່ຽນແປງຂອງດິນ;

4. ກຳນົດມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການປ່ຽນແປງເປົ້າໝາຍການນຳໃຊ້ທີ່ດິນ ກະສິກຳ ແລະ ທີ່ດິນປ່າໄມ້ ເປັນຕົ້ນ ຢຸດຕິການທຳລາຍປ່າໄມ້, ການຟື້ນຟູປ່າໄມ້ທີ່ເຊື່ອມໂຊມ, ການຟື້ນຟູຄຸນນະພາບດິນກະສິກຳ;

5. ສະໜອງຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຕົນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 36 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນວຽກງານຂອງຕົນ;

2. ສຶກສາຄົ້ນຄວ້າ ແລະ ຊຸກຍູ້ສົ່ງເສີມໃຫ້ບັນດາຫົວໜ່ວຍທຸລະກິດ ແລະ ອຸດສາຫະກຳນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ, ສ້າງໂຄງລ່າງພື້ນຖານອຸດສາ ຫະກຳໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ;

3. ສະໜອງຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຕົນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 37 ສິດ ແລະ ໜ້າທີ່ຂອງກະຊວງພະລັງງານ ແລະ ບໍ່ແຮ່

ກະຊວງພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນວຽກງານຂອງຕົນ;

2. ສຶກສາຄົ້ນຄວ້າ ແລະ ວາງມາດຕະຖານ ການພັດທະນາໂຄງລ່າງພື້ນຖານດ້ານພະລັງງານ ແລະ ບໍ່ແຮ່ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ;

3. ພັດທະນາ, ຊຸກຍູ້ສົ່ງເສີມການພັດທະນາແຫຼ່ງພະລັງງານທົດແທນ ແລະ ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ;

4. ສະໜອງຂໍ້ມູນ ກ່ຽວກັບແຜນການຄຸ້ມຄອງອ່າງເກັບນ້ຳໃນເຂື່ອນໄຟຟ້ານ້ຳຕົກ ລວມທັງຂໍ້ມູນການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຕົນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 38 ສິດ ແລະ ໜ້າທີ່ຂອງກະຊວງໂຍທາທິການ ແລະ ຂົນສົ່ງ

ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນວຽກງານຂອງຕົນ;

2. ສຶກສາຄົ້ນຄວ້າ ແລະ ວາງມາດຕະຖານການພັດທະນາໂຄງລ່າງພື້ນຖານດ້ານໂຍທາທິການ ແລະ ການຂົນສົ່ງ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ຊຸກຍູ້ສົ່ງເສີມການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ເຂົ້າໃນວຽກງານໂຍທາທິການ, ຂົນສົ່ງ ແລະ ການພັດທະນາຕົວເມືອງ ເພື່ອຫຼຸດຜ່ອນການປ່ອຍອາຍເຮືອນແກ້ວ;

3. ສະໜອງຂໍ້ມູນ ກ່ຽວກັບການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຕົນໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 39 ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນວຽກງານຂອງຕົນ;

2. ສະໜອງ ແລະ ເຊື່ອມຕໍ່ລະບົບຂໍ້ມູນ ຂ່າວສານ ກ່ຽວກັບການຄຸ້ມຄອງໄພພິບັດ ກັບລະບົບຂໍ້ມູນ ຂ່າວສານ ກ່ຽວກັບການປ່ຽນແປງດິນຟ້າອາກາດ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

3. ແລກປ່ຽນຂໍ້ມູນ ຂ່າວສານກັບຂະແໜງການອື່ນທີ່ກ່ຽວຂ້ອງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 40 ສິດ ແລະ ໜ້າທີ່ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນວຽກງານຂອງຕົນ;

2. ສຶກສາຄົ້ນຄວ້າ, ພັດທະນາ, ຊຸກຍູ້ສົ່ງເສີມການສ້າງມາດຕະຖານ, ການພັດທະນານະວັດຕະກຳໃໝ່, ພະລັງງານຊີວະພາບ, ພະລັງງານທາງເລືອກທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຫຼຸດຜ່ອນການປ່ອຍທາດທາດອາຍເຮືອນແກ້ວ;

3. ສະໜອງຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຂອງຕົນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 41 ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນວຽກງານຂອງຕົນ;

2. ເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບການປ່ຽນແປງດິນຟ້າອາກາດ ຜ່ານສື່ມວນຊົນ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;

3. ສະໜອງຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຕົນໃຫ້ກະຊວງຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 42 ສິດ ແລະ ໜ້າທີ່ຂອງກະຊວງສຶກສາທິການ ແລະ ກີລາ

ກະຊວງສຶກສາທິການ ແລະ ກີລາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນວຽກງານຂອງຕົນ;

2. ຄົ້ນຄວ້າ ແລະ ສ້າງຫຼັກສູດການສຶກສາກ່ຽວກັບການປ່ຽນແປງດິນຟ້າອາກາດ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 43 ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ

ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນວຽກງານຂອງຕົນ;

2. ສຶກສາຄົ້ນຄວ້າ, ການແຜ່ລະບາດຂອງພະຍາດຕໍ່ກຸ່ມຄົນ ທີ່ມີຄວາມບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ, ສ້າງຈິດສຳນຶກກ່ຽວກັບຄວາມສຳພັນລະຫວ່າງການປ່ຽນແປງດິນຟ້າອາກາດ ແລະ ສຸຂະພາບ;

3. ສະໜອງຂໍ້ມູນກ່ຽວກັບການປ່ຽນແປງດິນຟ້າອາກາດ ທີ່ຕິດພັນກັບຂະແໜງການຂອງຕົນ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 44 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການປະສານສົມທົບ ແລະ ໃຫ້ການຮ່ວມມືກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງ, ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ການສ້າງໂຄງລ່າງພື້ນຖານ ໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນທາດອາຍເຮືອນແກ້ວ ຕາມພາລະບົດບາດຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 45 ເນື້ອໃນການກວດກາ

ການກວດກາວຽກງານການປ່ຽນແປງດິນຟ້າອາກາດ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ;

2. ການຈັດຕັ້ງ ແລະການເຄື່ອນໄຫວ ຂອງອົງການຈັດຕັ້ງປະຕິບັດວຽກງານການປ່ຽນແປງດິນຟ້າອາກາດ;

3. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງພະນັກງານກ່ຽວກັບການປ່ຽນແປງດິນຟ້າອາກາດ.

ມາດຕາ 46 ຮູບການການກວດກາ

ການກວດກາ ວຽກງານການປ່ຽນແປງດິນຟ້າອາກາດ ມີສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ການກວດກາໃຫ້ດຳເນີນທັງກວດກາເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

ໝວດທີ 10
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກຳລັດສະບັບນີ້ ຫຼື ລະບຽບການທີ່ກ່ຽວຂ້ອງ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ມາດຕະການທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ຕາມແຕ່ກໍລະນີເບົາ ຫຼື ໜັກ.

ໝວດທີ 11
ບົດບັນຍັດສຸດທ້າຍ

ມາດຕາ 49 ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຈັດຕັ້ງ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 50 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງໄດ້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຕາງໜ້າລັດຖະບານແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ